ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມເຜີຍແຜ່ນິຕິກຳ ແລະ ລະບຽບການວຽກຮ່ວມມືສາກົນຂອງ ທຫລ




ໃນວັນທີ 29 ມີນາ 2022, ທີ່ຫ້ອງປະຊຸມໃຫຍ່ຊັ້ນ 7 (ຕຶກໃໝ່) ທຫລ ໄດ້ຈັດກອງປະຊຸມເຜີຍວຽກງານນິຕິກຳ-ລະບຽບການວຽກຮ່ວມມືສາກົນ ຂອງທະນາຄານແຫ່ງ ສປປ ລາວ ໃນຮູບແບບເຊິ່ງໜ້າ ແລະ ອອນລາຍ, ໂດຍການເປັນປະທານຂອງ ທ່ານ ປອ. ສົມປະສົງ ພົມມະສານ, ຮອງຫົວໜ້າກົມຮ່ວມມືສາກົນ, ຊຶ່ງມີບັນດາທ່ານຫົວໜ້າກົມ-ທຽບເທົ່າກົມ, ທ່ານຫົວໜ້າສາຂາ ທຫລ, ຄະນະກົມ-ຄະນະສາຂາ, ຄະນະພະແນກ, ພະນັກງານວິຊາການຈາກບັນດາກົມພາຍໃນ ທຫລ ແລະ ຕ່າງໜ້າຈາກທະນາຄານທຸລະກິດລັດ ເຂົ້າຮ່ວມທັງໝົດ 63 ທ່ານ.



ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອເຜີຍແຜ່ບັນດາເອກະສານນິຕິກຳ ແລະ ລະບຽບການທີ່ກ່ຽວຂ້ອງຈຳນວນໜຶ່ງທີ່ໄດ້ສຳເລັດການຄົ້ນຄວ້າ ຫຼັງຈາກກອງປະຊຸມວຽກງານຮ່ວມມືສາກົນ ຄັ້ງທີ I ທີ່ເມືອງວັງວຽງ, ແຂວງວຽງຈັນ ໃນເດືອນ ກຸມພາ 2021 ຜ່ານມາ ແລະ ພ້ອມດຽວກັນນີ້, ກໍ່ເພື່ອສ້າງຄວາມຮັບຮູ້-ຄວາມເຂົ້າໃຈ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດວຽກງານຮ່ວມມືສາກົນຂອງຂະແໜງການທະນາຄານ.

ກອງປະຊຸມດັ່ງກ່າວໄດ້ດຳເນີນເປັນເວລາເຄິ່ງວັນ, ຊຶ່ງໄດ້ຮັບຟັງການນຳສະເໜີຂອງ ຄະນະກົມ ແລະ ຄະນະພະແນກ ພາຍໃນກົມຮ່ວມມືສາກົນ, ລວມມີ: **(1)** ແຜນການຍາດແຍ່ງການຊ່ວຍເຫຼືອວິຊາການຈາກສາກົນຂອງ ທຫລ ໄລຍະ 05 ປີ (2021-2025); **(2)** ແຈ້ງການ ວ່າດ້ວຍຂັ້ນຕອນການຈັດຕັ້ງປະຕິບັດວຽກຮ່ວມມືສາກົນຂອງ ທະນາຄານແຫ່ງ ສປປ ລາວ, ສະບັບເລກທີ 172/ທຫລ, ລົງວັນທີ 07 ທັນວາ 2021; ແລະ **(3)** ຄຳແນະນຳ ວ່າດ້ວຍກົນໄກການສະເໜີສ້າງສັນຍາສາກົນ ໃນນາມທະນາຄານແຫ່ງ ສປປ ລາວ , ສະບັບເລກທີ 291/ກຣສ, ລົງວັນ

ພ້ອມນີ້, ກອງປະຊຸມໄດ້ມີການແລກປ່ຽນຄຳຄິດເຫັນຢ່າງກົງໄປກົງມາ ຕໍ່ເນື້ອໃນຂອງນິຕິກຳທີ່ໄດ້ນຳສະເໜີ ແລະ ຍົກຫຼາຍບັນຫາກ່ຽວຂ້ອງກັບວຽກງານຮ່ວມມືສາກົນຈາກບັນດາກົມ ເພື່ອເປັນຂໍ້ມູນ ແລະ ບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຮ່ວມມືສາກົນໃນສະເພາະໜ້າໃຫ້ມີຄວາມຄ່ອງຕົວຍິ່ງຂຶ້ນ ແລະ ທັງຮັບປະກັນຜົນປະໂຫຍດສູງສຸດຂອງ ທຫລ ກໍ່ຄືບັນດາກົມຕ່າງໆພາຍໃນ ທຫລ ຈາກການຈັດຕັ້ງປະຕິບັດວຽກງານພົວພັນຮ່ວມມືສາກົນ.



#ຂ່າວໂດຍ: ກົມຮ່ວມມືສາກົນ

#ພາບໂດຍ: ນາງ ປາໃນ ພັນທະລາ

ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ